ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 554 /ລບ

ນະຄອນຫຼວງວຽງຈັນ, ວັນທີ 04 / 09 / 25

# ດຳລັດ
# ວ່າດ້ວຍ ການຕ້ານການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 64/ສພຊ, ລົງວັນທີ 01 ກໍລະກົດ 2024;
- ອີງຕາມ ໜັງສືສະເໜີຂອງທະນາຄານ ແຫ່ງ ສປປ ລາວ ສະບັບເລກທີ 123/ທຫລ, ລົງວັນທີ 22 ພຶດສະພາ 2025.

**ລັດຖະບານ ອອກດຳລັດ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການ ຄຸ້ມຄອງ ແລະ ຕິດຕາມ ກວດກາ ການເຄື່ອນໄຫວການຕ້ານການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ ເຮັດໃຫ້ສັງຄົມ ມີຄວາມສະຫງົບ ແລະ ລະບຽບຮຽບຮ້ອຍ, ລະບົບເສດຖະກິດ-ການເງິນ ມີຄວາມ ເຂັ້ມແຂງ ແລະ ໝັ້ນຄົງ ສາມາດເຊື່ອມໂຍງກັບ ພາກພື້ນ ແລະ ສາກົນ ປະກອບສ່ວນ ເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ການຕ້ານການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ**

ການຕ້ານການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ແມ່ນ ການເຄື່ອນໄຫວຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີໜ້າທີ່ໃນການ ຊອກຮູ້, ຕ້ານ, ສະກັດກັ້ນ, ຈຳກັດ ແລະ ປາບປາມ ການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

**1. ການແຜ່ຜາຍອາວຸດທຳລາຍລ້າງຜານ ໝາຍເຖິງ** ການ ຂະຫຍາຍຕົວ, ແຜ່ກະຈາຍ ແລະ ເຮັດໃຫ້ອາວຸດທຳລາຍລ້າງຜານ ທີ່ຜິດກົດໝາຍສາກົນ ຖືກສົ່ງໄປຍັງປະເທດ ຫຼື ກຸ່ມຄົນທີ່ບໍ່ຄວນໄດ້ຮັບ ໂດຍບໍ່ຖືກກວດສອບ ຫຼື ຄວບຄຸມ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ ຂອງ ສປປ ລາວ ແລະ ສົນທິສັນຍາທີ່ກ່ຽວຂ້ອງ ຂອງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ທີ່ ສປປ ລາວ ເປັນພາຄີ;

**2. ການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ** ໝາຍເຖິງ ການ ສະໜອງທຶນ ຫຼື ໃຫ້ບໍລິການ ທາງດ້ານການເງິນ ຫຼື ການໂອນ, ອຳນວຍຄວາມສະດວກ, ເປັນທາງຜ່ານ, ເປັນນາຍໜ້າ ຊຶ່ງທຶນດັ່ງກ່າວໄດ້ມາຄອບຄອງ, ຖືກນຳໃຊ້ ທັງໝົດ ຫຼື ບາງສ່ວນ ເຂົ້າໃນການ ຜະລິດ, ຊື້, ພັດທະນາ, ສົ່ງອອກ, ຂົນສົ່ງ, ເກັບຮັກສາ ຫຼື ນຳໃຊ້ ອາວຸດນິວເຄຼຍ, ອາວຸດເຄມີ, ອາວຸດຊີວະພາບ, ອາວຸດກຳມັນຕະພາບລັງສີ ລວມທັງ ອຸປະກອນທີ່ກ່ຽວຂ້ອງ ເປັນຕົ້ນ ລະບົບເຕັກໂນໂລຊີ ແລະ ສິນຄ້າທີ່ນຳໃຊ້ສອງດ້ານ ທີ່ຂັດກັບລະບຽບການ ຂອງ ສປປ ລາວ ແລະ ພັນທະສາກົນ ຕາມທີ່ກຳນົດໄວ້ໃນສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ;

**3. ທຶນ ທີ່ຕ້ອງ ກັກ ຫຼື ລະງັບ, ຍຶດ ແລະ ອາຍັດ** ໝາຍເຖິງ ເງິນ ຫຼື ຊັບສິນ ທາງດ້ານການເງິນ, ຊັບພະຍາກອນທາງດ້ານເສດຖະກິດ, ຊັບສິນທຸກປະເພດ ທີ່ມີ ຕົວຕົນ ຫຼື ບໍ່ມີຕົວຕົນ, ຈັບຕ້ອງໄດ້ ຫຼື ຈັບຕ້ອງບໍ່ໄດ້, ເຄື່ອນຍ້າຍໄດ້ ຫຼື ເຄື່ອນຍ້າຍບໍ່ໄດ້ ແລະ ເອກະສານທາງດ້ານກົດໝາຍ ຫຼື ເຄື່ອງມືໃນຮູບແບບໃດໜຶ່ງ ລວມທັງ ຮູບແບບ ເອເລັກໂຕຣນິກ ຫຼື ດິຈິຕອນ, ຫຼັກຖານທີ່ສະແດງ ເຖິງ/ຫຼື ດອກເບ້ຍໃນກອງທຶນ ຫຼື ຊັບສິນໃດໜຶ່ງ ລວມທັງ ສິນເຊື່ອທະນາຄານ, ແຊັກເດີນທາງ, ແຊັກທະນາຄານ, ເງິນສັ່ງຈ່າຍ, ຮຸ້ນ, ຫຼັກຊັບ, ພັນທະບັດ, ໜັງສືສິນເຊື່ອ, ດອກເບ້ຍອື່ນ, ເງິນປັນຜົນ ຫຼື ລາຍໄດ້ອື່ນ ຈາກ/ຫຼື ຕາມມູນຄ່າທີ່ເກີດຈາກ ກອງທຶນ ຫຼື ຊັບສິນອື່ນ ແລະ ຊັບສິນໃດ ທີ່ອາດຈະເປັນການໃຊ້ ເພື່ອ ການໄດ້ຮັບ ທຶນ, ສິນຄ້າ ຫຼື ການບໍລິການ ທີ່ເປັນກຳມະສິດ, ຢູ່ໃນການຄອບຄອງ ຫຼື ການຄວບຄຸມ ທາງກົງ ຫຼື ທາງອ້ອມສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ ຂອງຜູ້ຖືກກຳນົດໃນບັນຊີທີ່ພົວພັນກັບການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ຫຼື ຜູ້ທີ່ຖືກຳມະສິດແທນ ຫຼື ທຶນ ທີ່ຢູ່ພາຍໃຕ້ການຄວບຄຸມບັນຊາຂອງຜູ້ທີ່ຖືກກຳນົດຢູ່ໃນບັນຊີລາຍຊື່ ຫຼື ທຶນ ຂອງ ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ຫຼື ກຸ່ມຄົນ ທີ່ພົວພັນກັບການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ຕາມທີ່ໄດ້ກຳນົດໄວ້ໃນຍັດຕິ 1718 (ປີ 2006), 2231 (ປີ 2015) ແລະ ຍັດຕິອື່ນທີ່ກ່ຽວຂ້ອງ ຂອງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ;

**4. ອາວຸດທຳລາຍລ້າງຜານ (Weapons of Mass Destruction)** ໝາຍເຖິງ ອາວຸດທີ່ມີ ອານຸພາບ ຫຼື ອຳນາດທຳລາຍລ້າງ ສູງ ເປັນຕົ້ນ ອາວຸດນິວເຄຼຍ, ອາວຸດເຄມີ, ອາວຸດຊີສະພາບ, ອາວຸດກຳມັນຕະພາບລັງສີ ລວມທັງອາວຸດອື່ນທີ່ຈະພັດທະນາຂຶ້ນໃຫ້ ມີຄຸນລັກສະນະ ຫຼື ປະສິດທິພາບທຳລາຍລ້າງສູງ ຊຶ່ງຂັດກັບລະບຽບການ ຂອງ ສປປ ລາວ ແລະ ສົນທິສັນຍາທີ່ ສປປ ລາວ ເປັນພາຄີ;

**5. ອາວຸດນິວເຄຼຍ (Nuclear Weapon)** ໝາຍເຖິງ ອຸປະກອນລະເບີດ ທີ່ສາມາດປ່ອຍພະລັງງານອອກມາແບບບໍ່ສາມາດຄວບຄຸມໄດ້ ຊຶ່ງບໍ່ລວມເອົາ ພາຫະນະຂົນສົ່ງ ຫຼື ລະບົບນຳສົ່ງ (Delivery System) ຫຼື ວິທີການນຳສົ່ງອຸປະກອນນັ້ນ ຖ້າຫາກວ່າອາວຸດນິວເຄຼຍນັ້ນ ສາມາດແຍກອອກຈາກກັນໄດ້ ແລະ ບໍ່ແມ່ນສ່ວນໜຶ່ງ ທີ່ຕິດແໜ້ນກັນເປັນຕົ້ນ ລູກສອນໄຟ, ເຮືອບິນຖິ້ມລະເບີດ, ເຮືອດຳນ້ຳ;

**6. ອາວຸດເຄມີ (Chemical Weapons)** ໝາຍເຖິງ ອາວຸດທີ່ມີການໂຮມ ຫຼື ແຍກກັນ ຂອງເຄມີທີ່ເປັນພິດ, ສານຕັ້ງຕົ້ນ, ວັດຖຸລະເບີດ, ອຸປະກອນທີ່ຖືກອອກແບບສະເພາະ ທີ່ເຮັດໃຫ້ເກີດການເສຍຊີວິດ ຫຼື ຄວາມອັນຕະລາຍສູງ ຍ້ອນຄຸນລັກສະນະຂອງເຄມີ ຫຼື ອຸປະກອນໃດໜຶ່ງ ທີ່ອອກແບບສະເພາະ ສຳລັບການນຳໃຊ້ໂດຍ ກົງກັບກັບອາວຸດເຄມີດັ່ງກ່າວ;

**7. ອາວຸດຊີວະພາບ (Biological Weapons)** ໝາຍເຖິງ ສານພິດ, ທາດຊີວະພາບ ແລະ ເຊື້ອຈຸລິນຊີ ທີ່ນຳມາຜະລິດເປັນອາວຸດຊີວະພາບ ຊຶ່ງບໍ່ມີຈຸດປະສົງເພື່ອປ້ອງກັນພະຍາດ ແລະ ຄວາມໝັ້ນຄົງຂອງຊາດ;

**8. ອາວຸດກຳມັນຕະພາບລັງສີ (Radioactive Material)** ໝາຍເຖິງ ອຸປະກອນນິວເຄຼຍ ແລະ ສານກຳມະຕະພາບລັງສີ ຊຶ່ງມີນິວເຄຼຍສະຫຼາຍຕົວໄດ້ເອງ ເຊັ່ນ: ອານຸພາບອາຟາ, ເບຕາ, ນິວຕູຣອນ ແລະ ລັງສີແກຣມມາ ທີ່ມີຄຸນລັກສະນະທາງລັງສີວິທະຍາ ຫຼື ຟິວໄຊລ໌ ທີ່ສົ່ງຜົນກະທົບໃຫ້ເກີດການເສຍຊີວິດ, ການບາດເຈັບໜັກ ຫຼື ຄວາມເສຍຫາຍຢ່າງຫຼວງຫຼາຍ ຕໍ່ຊັບສິນ ຫຼື ສິ່ງແວດລ້ອມ;

**9. ເຄມີທີ່ເປັນພິດ** ໝາຍເຖິງ ສານເຄມີປະເພດຕ່າງໆ ທີ່ຜ່ານການປະຕິກິລິຍາທາງເຄມີ ເພື່ອຈຸດປະສົງກໍ່ໃຫ້ເກີດການເສຍຊີວິດ, ການຂາດແຄນຊົ່ວຄາວ ຫຼື ເປັນອັນຕະລາຍຖາວອນ ຕໍ່ມະນຸດ ຫຼື ສັດ ໂດຍບໍ່ຈຳເປັນຕ້ອງຄຳນຶງເຖິງ ແຫຼ່ງກຳເນີດ ຫຼື ວິທີການຜະລິດ ຢູ່ບ່ອນໃດກໍ່ຕາມ;

**10. ຫົວໜ່ວຍທີ່ມີໜ້າທີ່ລາຍງານ** ໝາຍເຖິງ ນິຕິບຸກຄົນ ແລະ ບຸກຄົນ ທີ່ມີຄວາມຮັບຜິດຊອບ ໃນການຈັດຕັ້ງປະຕິບັດວຽກງານຕ້ານ ການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ເປັນຕົ້ນ ທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກ, ໂຮງຊວດຈຳ, ບໍລິສັດເຊົ່າສິນເຊື່ອ, ຜູ້ໃຫ້ບໍລິການຊຳລະເງິນ, ບໍລິສັດປະກັນໄພ, ບໍລິສັດຫຼັກຊັບ, ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ, ກອງທຶນເພື່ອການລົງທຶນ, ຜູ້ໃຫ້ບໍລິການ ຊັບສິນເໝືອນຈິງ, ທຸລະກິດ ຊື້ ຂາຍ ອະສັງຫາລິມະຊັບ, ທຸລະກິດ ຊື້ ຂາຍ ວັດຖຸມີຄ່າ, ວິສາຫະກິດບັນຊີ, ວິສາຫະກິດກວດສອບ, ທຸລະກິດກາຊີໂນ, ວິສາຫະກິດກົດໝາຍ, ທະນາຍຄວາມ;

**11.ທຸລະກຳ** ໝາຍເຖິງ ທຸກ ກິດຈະກຳທີ່ມີ ການເຄື່ອນໄຫວທາງການເງິນ ໃຫ້ແກ່ລູກຄ້າຂອງຕົນ ເປັນຕົ້ນ ການຊື້ ຂາຍ ຫຼື ການຊຳລະຄ່າບໍລິການ, ການຝາກ, ການຖອນ, ການສັ່ງຈ່າຍ ຫຼື ການໂອນ ທີ່ກ່ຽວຂ້ອງກັບການບໍລິການດ້ານທະນາຄານ, ສະຖາບັນການເງິນຈຸລະພາກ, ປະກັນໄພ, ຫຼັກຊັບ, ວັດຖຸມີຄ່າ, ຊັບສິນເໝືອນຈິງ ລວມທັງ ການໃຫ້ບໍລິການລູກຄ້າ ເປັນຕົ້ນ ວິສາຫະກິດໄປສະນີ, ວິສາຫະກິດບັນຊີ, ວິສາຫະກິດກວດສອບ, ວິສາຫະກິດກົດໝາຍ, ທະນາຍຄວາມ, ໂຮງຊວດຈຳ, ບໍລິສັດເຊົ່າສິນເຊື່ອ, ຜູ້ໃຫ້ບໍລິການຊຳລະເງິນ, ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ, ກອງທຶນເພື່ອການລົງທຶນ, ທຸລະກິດ ຊື້ ຂາຍ ອະສັງຫາລິມະຊັບ, ທຸລະກິດກາຊີໂນ;

**12. ການຍຶດ** ໝາຍເຖິງ ການເອົາທຶນ ຂອງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ມາໄວ້ ຕາມຄຳສັ່ງຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຂອງກະຊວງປ້ອງກັນຄວາມສະຫງົບ;

**13. ການອາຍັດ** ໝາຍເຖິງ ການບໍ່ອະນຸຍາດໃຫ້ ຊື້ ຂາຍ, ມອບ, ໂອນ, ແລກປ່ຽນ, ຈຳນຳ, ຈຳນອງ, ຄ້ຳປະກັນ, ຕໍ່ເຕີມ, ທຳລາຍ ຫຼື ປ່ຽນແປງ, ເຄື່ອນຍ້າຍ ຫຼື ເຄື່ອນໄຫວ ທຶນ ທີ່ເປັນ ຊັບເຄື່ອນທີ່ ຫຼື ຊັບຄົງທີ່ ຂອງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ຕາມຄຳສັ່ງຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຂອງກະຊວງປ້ອງກັນຄວາມສະຫງົບ;

**14. ຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ** ໝາຍເຖິງ ການຈັດຕັ້ງບໍ່ປະຈຳການ ຊຶ່ງຖືກແຕ່ງຕັ້ງໂດຍນາຍົກລັດຖະມົນຕີ ປະກອບດ້ວຍ ຮອງນາຍົກລັດຖະມົນຕີ ເປັນປະທານ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ ເປັນຮອງປະທານ ທັງເປັນຜູ້ປະຈຳການ, ຮອງລັດຖະມົນຕີ ຫຼື ຮອງຫົວໜ້າອົງການ ທີ່ກ່ຽວຂ້ອງ ເປັນຮອງປະທານ ແລະ ກຳມະການ ໂດຍມີສຳນັກງານຂໍ້ມູນຕ້ານການຟອກເງິນ ຂຽນຫຍໍ້ວ່າ "ສຕຟງ" ເປັນກົງຈັກຊ່ວຍວຽກ. ຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂຽນຫຍໍ້ວ່າ "ຄຕຟງ".

### ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບການຕ້ານການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ

ລັດ ຊຸກຍູ້, ສົ່ງເສີມ, ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ແກ່ວຽກງານຕ້ານການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ດ້ວຍການ ສະໜອງງົບປະມານ, ປະກອບ ບຸກຄະລາກອນ, ພາຫະນະ ແລະ ວັດຖຸປະກອນ ແລະ ເຕັກໂນໂລຊີທີ່ທັນສະໄໝໃຫ້ແກ່ອົງການຄຸ້ມຄອງວຽກງານຕ້ານການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ.

ລັດ ຊຸກຍູ້, ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທຸກພາກສ່ວນ ເຂົ້າຮ່ວມໃນການເຄື່ອນໄຫວ ຕ້ານການສະໜອງທຶນໃຫ້ການແຜ່ຜາຍອາວຸດທຳລາຍລ້າງຜານ.

### ມາດຕາ 5 ຫຼັກການ ກ່ຽວກັບວຽກງານຕ້ານການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ

ການເຄື່ອນໄຫວວຽກງານຕ້ານການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດແຫ່ງຊາດ ແລະ ວິໄສທັດ ກ່ຽວກັບການຕ້ານສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ;
2. ຮັບປະກັນ ຄວາມສະຫງົບ, ຄວາມໝັ້ນຄົງຂອງຊາດ ແລະ ອຳນວຍຄວາມສະດວກທາງການເງິນ ແລະ ການຄ້າ;

3. ຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
4. ຮັບປະກັນຄວາມ ສະເໝີພາບ, ໂປ່ງໃສ, ຍຸຕິທຳ, ເປີດເຜີຍ ແລະ ສາມາດກວດສອບໄດ້;
5. ປະຕິບັດຕາມ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

**ມາດຕາ 6 ພັນທະຂອງພົນລະເມືອງ ໃນການຕ້ານການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພັນທະ ໃນການຕ້ານການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ເປັນຕົ້ນ ການຕິດຕາມ, ລາຍງານ, ສະໜອງຂໍ້ມູນ ແລະ ໃຫ້ການຮ່ວມມືໃນການຕ້ານການສະໜອງທຶນ ໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ.

**ມາດຕາ 7 ການປົກປ້ອງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ, ພະນັກງານ ແລະ ເຈົ້າໜ້າທີ່ ລວມທັງຜູ້ເຂົ້າຮ່ວມ ໃນການເຄື່ອນໄຫວກ່ຽວກັບວຽກງານຕ້ານການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລາຍຜານ ເປັນຕົ້ນ ຄະນະອຳນວຍການ, ຜູ້ຈັດການ ຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ແລະ ວິສາຫະກິດໄປສະນີ, ຜູ້ລາຍງານ, ຜູ້ສະໜອງຂໍ້ມູນຂ່າວສານ, ພະຍານ, ຜູ້ຊ່ຽວຊານ ທີ່ປະຕິບັດໜ້າທີ່ດ້ວຍຄວາມບໍລິສຸດໃຈ ລວມທັງຄອບຄົວຂອງພວກກ່ຽວ ຈະໄດ້ຮັບການປົກປ້ອງຕາມກົດໝາຍ ຈາກການຮ້ອງຟ້ອງທາງແພ່ງ ແລະ ອາຍາ, ການແກ້ແຄ້ນ, ຂົ່ມຂູ່ຕໍ່ ຊີວິດ, ສຸຂະພາບ, ອິດສະລະພາບ ແລະ ການສ້າງຄວາມເສຍຫາຍຕໍ່ ກຽດສັກສີ, ຊື່ສຽງ ຫຼື ຊັບສິນສ່ວນຕົວ.

ທຶນ, ຊັບສິນ ສິດ ແລະ ຜົນປະໂຫຍດ ຂອງບຸກຄົນທີສາມ ທີ່ບໍລິສຸດໃຈ ໄດ້ຮັບການເຄົາລົບ ແລະ ການປົກປ້ອງ ຕາມກົດໝາຍ.

**ມາດຕາ 8 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນ ກັບວຽກງານ ຕ້ານການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ຢູ່ ສປປ ລາວ.

**ມາດຕາ 9 ການຮ່ວມມືສາກົນ**

ລັດ ສົ່ງເສີມ ການພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບການຕ້ານການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກນິກ, ເຕັກໂນໂລຊີ ແລະ ການພັດທະນາຊັບພະຍາກອນມະນຸດ ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

## ໝວດທີ 2
## ການ ກັກ, ຍຶດ ແລະ ອາຍັດ ທຶນ ຂອງຜູ້ຢູ່ໃນບັນຊີລາຍຊື່ ທີ່ພົວພັນກັບການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ

**ມາດຕາ 10 ການ ລະງັບ ຫຼື ກັກ**

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ແລະ ວິສາຫະກິດໄປສະນີ ຕ້ອງກວດກາລູກຄ້າຂອງຕົນ ຢ່າງເປັນປະຈຳ ກ່ຽວກັບການເຄື່ອນໄຫວທຸລະກຳ ຫຼື ການໃຫ້ບໍລິການລູກຄ້າ ທີ່ ສຳເລັດ ຫຼື ພະຍາຍາມເຮັດ ແຕ່ບໍ່ສຳເລັດ.

ໃນການກວດກາລູກຄ້າ ຂອງວິສາຫະກິດໄປສະນີ ສາມາດກວດກາເຄື່ອງຝາກໄປສະນີ ທີ່ສົງໄສວ່າພົວພັນກັບ ຜູ້ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບ ການສະໜອງໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ.

ໃນກໍລະນີ ການພະຍາຍາມເຮັດທຸລະກຳ ແຕ່ບໍ່ສຳເລັດ ຫາກກວດພົບ ຫຼື ພົບເຫັນ ທຶນ ພົວພັນ ຫຼື ເປັນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຢູ່ໃນບັນຊີລາຍຊື່ ທີ່ພົວພັນກັບການສະໜອງທຶນໃຫ້ແກ່ການ

ແຜ່ຜາຍອາວຸດທຳລາຍລ້າງຜານ ຫົວໜ່ວຍທີ່ມີໜ້າທີ່ລາຍງານ ແລະ ວິສາຫະກິດໄປສະນີ ຕ້ອງລະງັບການເຮັດທຸລະກຳ ໂດຍບໍ່ແຈ້ງເຕືອນລູກຄ້າລ່ວງໜ້າ ພ້ອມທັງລາຍງານໃຫ້ ກະຊວງປ້ອງກັນຄວາມສະຫງົບ ແລະ ສຕຟງ ທັນທີທັນໃດ.

ໃນກໍລະນີ ການໃຫ້ບໍລິການທີ່ສຳເລັດ ຫາກກວດພົບ ຫຼື ພົບເຫັນ ທຶນ ທີ່ພົວພັນ ຫຼື ເປັນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຢູ່ໃນບັນຊີລາຍຊື່ ທີ່ພົວພັນກັບການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ຫົວໜ່ວຍທີ່ມີໜ້າທີ່ລາຍງານ ແລະ ວິສາຫະກິດໄປສະນີ ຕ້ອງກັກທຶນ ເພື່ອບໍ່ໃຫ້ມີການເຄື່ອນໄຫວ ໂດຍບໍ່ແຈ້ງເຕືອນລູກຄ້າລ່ວງໜ້າ ພ້ອມທັງລາຍງານໃຫ້ ກະຊວງປ້ອງກັນຄວາມສະຫງົບ ແລະ ສຕຟງ ທັນທີທັນໃດ.

**ມາດຕາ 11 ການ ຍຶດ ແລະ ອາຍັດ**

ພາຍຫຼັງໄດ້ຮັບການລາຍງານ ຈາກຫົວໜ່ວຍທີ່ມີໜ້າທີ່ລາຍງານ ແລະ ວິສາຫະກິດໄປສະນີ ກະຊວງປ້ອງກັນຄວາມສະຫງົບ ຕ້ອງດຳເນີນການອອກຄຳສັ່ງ ຍຶດ ຫຼື ອາຍັດ ທຶນ ຂອງຜູ້ຢູ່ໃນບັນຊີລາຍຊື່ ທີ່ພົວພັນກັບການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ທັນທີທັນໃດ.

ທຶນ ທີ່ຖືກ ຍຶດ ແລະ ອາຍັດ ນັ້ນ ຍັງຕ້ອງຖືກຮັກສາໄວ້ ຈົນກ່ວາຈະມີການຍົກເລີກ ຄຳສັ່ງຍຶດ ແລະ ອາຍັດ ຫຼື ໄດ້ຮັບການແກ້ໄຂ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 15 ຂອງດຳລັດສະບັບນີ້.

**ມາດຕາ 12 ການດຳເນີນການພາຍຫຼັງ ການ ຍຶດ ຫຼື ອາຍັດ ທຶນ**

ພາຍຫຼັງອອກຄຳສັ່ງ ຍຶດ ຫຼື ອາຍັດ ທຶນ ກະຊວງປ້ອງກັນຄວາມສະຫງົບ ຕ້ອງດຳເນີນການ ເກັບກຳ ຂໍ້ມູນ ຫຼັກຖານ ເພື່ອພິສູດວ່າ ຜູ້ຖືກສົງໄສ ແລະ ທຶນ ດັ່ງກ່າວ ພົວພັນ ຫຼື ບໍ່ພົວພັນກັບ ການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ໃຫ້ສຳເລັດ ພາຍໃນ ສາມສິບວັນ; ຖ້າການ ເກັບກຳ ຂໍ້ມູນ ຫຼັກຖານ ຫາກພົວພັນກັບຫຼາຍພາກສ່ວນ ຫຼື ມີຄວາມຫຍຸ້ງຍາກສັບສົນນັ້ນ ສາມາດຕໍ່ກຳນົດເວລາການເກັບກຳຂໍ້ມູນໄດ້ຕື່ມອີກ ສາມສິບວັນ; ກໍລະນີຕ້ອງໄດ້ ເກັບກຳຂໍ້ມູນ ຫຼັກຖານ ຢູ່ຕ່າງປະເທດ ຕ້ອງດຳເນີນໃຫ້ສຳເລັດ ພາຍໃນ ເກົ້າສິບວັນ.

ກໍລະນີ ພິສູດໄດ້ວ່າ ທຶນດັ່ງກ່າວ ຫາກບໍ່ພົວພັນກັບການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ແລະ ສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ຖອນຊື່ຜູ້ເປັນເຈົ້າຂອງທຶນ ອອກຈາກບັນຊີລາຍຊື່ ຜູ້ທີ່ພົວພັນກັບການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ຄຳສັ່ງ ຍຶດ ຫຼື ອາຍັດ ທຶນ ດັ່ງກ່າວ ຈະຕົກໄປ ທັນທີທັນໃດ.

ກະຊວງປ້ອງກັນຄວາມສະຫງົບ ຕ້ອງແຈ້ງໄປຫາຫົວໜ່ວຍທີ່ມີໜ້າທີ່ລາຍງານ, ວິສາຫະກິດໄປສະນີ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງ ເພື່ອຊາບ ແລະ ຍົກເລີກການນຳໃຊ້ມາດຕະການທາງບໍລິຫານ ພ້ອມທັງສົ່ງທຶນດັ່ງກ່າວຄືນ ທັນທີທັນໃດ.

**ມາດຕາ 13 ການລາຍງານການເຄື່ອນໄຫວ ຂອງຜູ້ຢູ່ໃນບັນຊີລາຍຊື່ ຫຼື ທີ່ພົວພັນກັບ ການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫາກພົບເຫັນທຸກການເຄື່ອນໄຫວຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຢູ່ໃນບັນຊີລາຍຊື່ ຫຼື ພົວພັນກັບການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ສາມາດຢຸດຕິການເຄື່ອນໄຫວດັ່ງກ່າວ ພ້ອມທັງລາຍງານ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຫຼື ຂະແໜງການປ້ອງກັນຄວາມສະຫງົບ ແລະ ສຕຟງ ທັນທີທັນໃດ ເພື່ອດຳເນີນການແກ້ໄຂ ແລະ ນຳໃຊ້ມາດຕະການທາງບໍລິຫານຕໍ່ການເຄື່ອນໄຫວດັ່ງກ່າວ.

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຫາກສົງໄສ ຕໍ່ການເຄື່ອນໄຫວທຸລະກຳ ຫຼື ການບໍລິການ ຫຼື ລູກຄ້າ ທີ່ຢູ່ໃນບັນຊີລາຍຊື່ ຫຼື ພົວພັນກັບ ການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ຕ້ອງລາຍງານໄປຫາ ສຕຟງ ທັນທີທັນໃດ, ສຳລັບວິສາຫະກິດໄປສະນີ ໃຫ້ລາຍງານໄປຫາ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຂອງກະຊວງປ້ອງກັນຄວາມສະຫງົບ ທັນທີທັນໃດ.

**ມາດຕາ 14 ການກວດສອບຂໍ້ມູນທີ່ໃກ້ຄຽງ ຫຼື ຄ້າຍຄືກັນ**

ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ວິສາຫະກິດໄປສະນີ ແລະ ພາກສ່ວນອື່ນ ຕ້ອງໄດ້ກວດສອບຂໍ້ມູນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ໃກ້ຄຽງ ຫຼື ຄ້າຍຄືກັນ ກັບຜູ້ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບ ການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ ເປັນຕົ້ນ ຊື່, ນາມສະກຸນ, ວັນ, ເດືອນ, ປີເກີດ ແລະ ເອກະສານຢັ້ງຢືນຕົວຕົນອື່ນ ຢ່າງເປັນປະຈຳ ແລະ ຕໍ່ເນື່ອງ ເພື່ອກວດສອບວ່າ ບຸກຄົນດັ່ງກ່າວ ບໍ່ມີພຶດຕິກຳ ຫຼື ການເຄື່ອນໄຫວ ທີ່ເປັນການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ.

ກໍລະນີ ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ວິສາຫະກິດໄປສະນີ ແລະ ພາກສ່ວນອື່ນ ບໍ່ສາມາດກວດສອບຂໍ້ມູນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ໃກ້ຄຽງ ຫຼື ຄ້າຍຄືກັນໄດ້ ຕ້ອງສະເໜີໄປຫາກະຊວງປ້ອງກັນ ຄວາມສະຫງົບ ແລະ ສຕຟງ ທັນທີທັນໃດ ເພື່ອຢັ້ງຢືນຄວາມຖືກຕ້ອງ ກ່ຽວກັບຂໍ້ມູນດັ່ງກ່າວ.

ພາຍຫຼັງກວດສອບຂໍ້ມູນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ແລ້ວ ຫາກເຫັນວ່າ ເປັນຜູ້ທີ່ ມີລາຍຊື່ທີ່ໃກ້ຄຽງ ຫຼື ຄ້າຍຄືກັນ ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ວິສາຫະກິດໄປສະນີ ແລະ ພາກສ່ວນອື່ນ ຕ້ອງ ຍົກເລີກ ການ ລະງັບ, ກັກ ທຶນ ທັນທີທັນໃດ.

## ໝວດທີ 3
## ການແກ້ໄຂຜົນກະທົບຈາກການ ຍຶດ ຫຼື ອາຍັດ ທຶນ ຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ

**ມາດຕາ 15 ການແກ້ໄຂຜົນກະທົບຈາກ ການ ຍຶດ ຫຼື ອາຍັດ ທຶນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຖືກກຳນົດເຂົ້າ ໃນບັນຊີລາຍຊື່ທີ່ພົວພັນກັບ ການສະໜອງໃຫ້ແກ່ ການແຜ່ພາຍອາວຸດທຳລາຍລ້າງຜານ ທີ່ໄດ້ຮັບຜົນກະທົບຈາກການ ຍຶດ ຫຼື ອາຍັດ ທຶນ ມີສິດສະເໜີ ຫຼື ຮ້ອງຂໍ ໄປ ຫາກະຊວງປ້ອງກັນຄວາມສະຫງົບ ເພື່ອພິຈາລະນາແກ້ໄຂ.

ການແກ້ໄຂຜົນກະທົບຈາກການ ຍຶດ ຫຼື ອາຍັດ ທຶນ ໃຫ້ປະຕິບັດ ດັ່ງນີ້:

1. ອະນຸຍາດໃຫ້ເຂົ້າເຖິງທຶນທີ່ຖືກ ຍຶດ ຫຼື ອາຍັດ ໄວ້ ຕາມເງື່ອນໄຂ ດັ່ງນີ້:

1.1. ເງື່ອນໄຂຍົກເວັ້ນພາຍໃຕ້ ຍັດຕິ 1718 (ປີ 2006) ແລະ ຍັດຕິ 1452 (ປີ 2002):

- ຄ່າໃຊ້ຈ່າຍພື້ນຖານ ເຊັ່ນ ຄ່າໃຊ້ຈ່າຍທີ່ຈຳເປັນຕໍ່ການດຳລົງຊີວິດປະຈຳວັນ ເປັນຕົ້ນ ຄ່າອາຫານ, ຄ່າເຊົ່າບ້ານ ຫຼື ຄ່າຜ່ອນເຮືອນ, ຄ່າຢາປົວພະຍາດ ແລະ ຄ່າປິ່ນປົວ, ຄ່າພາສີ, ຄ່າປະກັນໄພ, ຄ່າບໍລິການສາທາລະນຸປະ ໂພກ, ຄ່າໃຊ້ຈ່າຍສຳລັບການສຶກສາ;
- ຄ່າໃຊ້ຈ່າຍພິເສດ ທີ່ບໍ່ແມ່ນຄ່າໃຊ້ຈ່າຍພື້ນຖານ ແຕ່ມີຄວາມຈຳເປັນໃນການໃຊ້ບໍລິການດ້ານວິຊາຊີບ ເປັນຕົ້ນ ຄ່າຈ້າງທະນາຍຄວາມ, ຄ່າປິ່ນປົວສຸກເສີນ, ຄ່າໃຊ້ຈ່າຍທີ່ຈຳເປັນສຳລັບການດຳເນີນທຸລະກິດທີ່ຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການ;
- ຊຳລະໜີ້ສິນ ຫຼື ພັນທະຕ່າງໆ ທີ່ເກີດຂຶ້ນກ່ອນຍັດຕິ 1718 (ປີ 2006) ຖືກຮັບຮອງ ໂດຍມີ ເງື່ອນໄຂວ່າ ການຊຳລະນັ້ນບໍ່ແມ່ນເພື່ອຜົນປະໂຫຍດຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຖືກ ກຳນົດໃນບັນຊີລາຍຊື່;
- ຍັດຕິ 2270 (ປີ 2016) ຊຶ່ງເປັນຍັດຕິພັນຂະຫຍາຍຕໍ່ຂອງຍັດຕິ 1718 (ປີ 2006) ຊຶ່ງໄດ້ລະບຸວ່າ ການອາຍັດຊັບສິນບໍ່ນຳໃຊ້ກັບເງິນທຶນ ແລະ ຊັບ ທີ່ຈຳເປັນສຳລັບການດຳເນີນກິດຈະກຳຂອງຄະນະຜູ້ແທນ ຂອງ ຍັດຕິທີ່ກ່ຽວຂ້ອງ ປະຈຳອົງການສະຫະປະຊາຊາດ ແລະ ຊ່ຽວຊານຂອງອົງການທີ່ກ່ຽວຂ້ອງ.

1.2. ເງື່ອນໄຂການຍົກເວັ້ນພາຍໃຕ້ ຍັດຕິ 2231 (ປີ 2015):

- ໃຫ້ປະຕິບັດຕາມທີ່ກຳນົດໄວ້ໃນເງື່ອນໄຂ ຂໍ້ 1.1 ຂອງ ມາດຕານີ້;

- ກິດຈະກຳທີ່ກ່ຽວຂ້ອງກັບ ແຜນປະຕິບັດງານຮອບດ້ານຂອງກຸ່ມຮ່ວມມື ຕາມຍັດຕິ (Joint Comprehensive Plan Of Action (JCPOA) ອະນຸຍາດໃຫ້ມີການຍົກເວັ້ນເງິນທຶນທີ່ຈຳເປັນສຳລັບກິດຈະກຳ ທີ່ກ່ຽວຂ້ອງໂດຍກົງກັບລາຍການທີ່ລະບຸໄວ້ໃນຍັດຕິ 2231 (ປີ 2015) ເປັນຕົ້ນ ການຖ່າຍທອດ ແລະ ກິດຈະກຳທີ່ກ່ຽວຂ້ອງກັບນິຍເຄຼຍ, ກິດຈະກຳການຫຼຸດຜ່ອນໂຄງການນິວເຄຼຍ, ກິດຈະກຳກວດສອບ ແລະ ຕິດຕາມກວດກາ ຂອງອົງການພະລັງງານປະລາມະນູສາກົນ ຫຼື ກິດຈະກຳອື່ນໆ;

- ດອກເບ້ຍ ແລະ ລາຍຮັບຈາກບັນຊີທີ່ຖືກອາຍັດ: ອະນຸຍາດໃຫ້ໄດ້ຮັບດອກເບ້ຍ ຫຼື ລາຍຮັບອື່ນ ທີ່ເກີດຈາກ ສັນຍາ, ຂໍ້ຕົກລົງ ຫຼື ພັນທະອື່ນ ທີ່ເກີດຂຶ້ນກ່ອນບັນຊີດັ່ງກ່າວຖືກອາຍັດ ແລະ ບໍ່ກ່ຽວຂ້ອງກັບ ລາຍການທີ່ຖືກຫ້າມ ເປັນຕົ້ນ ວັດຖຸປະກອບ, ສິນຄ້າ, ເຕັກໂນໂລຊີ, ການຝຶກອົບຮົມ, ການຊ່ວຍເຫຼືອທາງດ້ານການເງິນ ແລະ ດ້ານອື່ນ, ການລົງທຶນ, ການເປັນນາຍໜ້າ ຫຼື ການບໍລິການ ທີ່ໄດ້ກ່າວໄວ້ໃນຍັດຕິ 2231 (ປີ 2015) ແລະ ໃນຍັດຕິອື່ນທີ່ພົນຂະຫຍາຍຈາກຍັດຕິ 2231 (ປີ 2015).

2. ລົບລ້າງຄຳສັ່ງ ຍຶດ, ອາຍັດ ແລະ ສົ່ງ ທຶນຄືນ ຖ້າຫາກເຈົ້າຂອງທຶນ ຖືກຖອນລາຍຊື່ອອກຈາກບັນຊີລາຍຊື່ຜູ້ພົວພັນກັບການການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ ຕາມຍັດຕິຂອງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ.

ການພິຈາລະນາ ກ່ຽວກັບກໍລະນີຍົກເວັ້ນຕາມເງື່ອນໄຂ ຍັດຕິ 1718 (2006) ແລະ ຍັດຕິ 2231 (ປີ 2015) ໃຫ້ປະຕິບັດຕາມການເຫັນດີ ຫຼື ບໍ່ເຫັນດີ ຂອງ ຄະນະກຳມະການຍັດຕິ 1718 (2006) ແລະ ຍັດຕິ 2231 (ປີ 2015) ຂອງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ.

### ມາດຕາ 16 ທຶນ ທີ່ຖືກ ຍຶດ ຫຼື ອາຍັດ ທີ່ເຈົ້າຂອງບໍ່ມາສະແດງເຈດຈຳນົງ

ທຶນ ທີ່ຖືກ ຍຶດ ແລະ ອາຍັດ ທີ່ຜູ້ເປັນເຈົ້າຂອງ ຫຼື ຜູ້ຮັບຜົນປະໂຫຍດ ບໍ່ມາສະແດງເຈດຈຳນົງຕໍ່ການຍຶດ ຫຼື ອາຍັດ ທຶນດັ່ງກ່າວ ໃຫ້ເຈົ້າໜ້າທີ່ກ່ຽວຂ້ອງ ຂອງກະຊວງປ້ອງກັນຄວາມສະຫງົບ ປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອດຳເນີນ ແລະ ພິຈາລະນາ ຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

## ໝວດທີ 4
## ການສະເໜີ ເພີ່ມຊື່ເຂົ້າໃນ ແລະ ຖອນຊື່ອອກຈາກ
## ບັນຊີລາຍຊື່ ທີ່ພົວພັນກັບການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ

### ມາດຕາ 17 ບັນຊີລາຍຊື່

ບັນຊີລາຍຊື່ ແມ່ນ ບັນຊີລາຍຊື່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ພົວພັນກັບການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ ທີ່ມີລາຍຊື່ ຕາມບັນຊີຂອງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ທີ່ຖືກສ້າງຂຶ້ນພາຍໃຕ້ຍັດຕິ ຂອງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ເປັນຕົ້ນ ຍັດຕິ 1718 (ປີ 2006), ຍັດຕິ 2231 (ປີ 2015) ແລະ ຍັດຕິອື່ນ ທີ່ກ່ຽວຂ້ອງ.

### ມາດຕາ 18 ການຄົ້ນຄວ້າສະເໜີ ເພີ່ມຊື່ເຂົ້າໃນ ຫຼື ຖອນຊື່ອອກຈາກ ບັນຊີລາຍຊື່

ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ຄົ້ນຄວ້າ ຂໍ້ມູນຫຼັກຖານ ກ່ຽວກັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຖືກສະເໜີ ເພີ່ມຊື່ເຂົ້າໃນ ຫຼື ຖອນຊື່ອອກຈາກ ບັນຊີລາຍຊື່ຂອງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ໂດຍປະສານສົມທົບກັບ ກະຊວງການຕ່າງປະເທດ, ກະຊວງອຸດສາຫະກຳ ແລະ ການຄ້າ, ສຕຟງ, ກະຊວງ ແລະ ອົງການທີ່ກ່ຽວຂ້ອງ ໂດຍອີງໃສ່ຂໍ້ມູນພື້ນຖານ ແລະ ເງື່ອນໄຂການກຳນົດລາຍຊື່ ຕາມທີ່ໄດ້ກຳນົດໄວ້ໃນຍັດຕິສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ແລະ ອົງການຕ້ານການຟອກເງິນສາກົນ ເປັນຜູ້ກຳນົດ ດັ່ງນີ້:

1. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ມີສ່ວນກ່ຽວຂ້ອງກັບແຜນການດຳເນີນງານກ່ຽວກັບ ນິວເຄຼຍ ລວມທັງແຜນການດຳເນີນງານອື່ນ ທີ່ກ່ຽວຂ້ອງກັບອາວຸດທຳລາຍລ້າງຜານ ແລະ ແຜນການດຳເນີນງານ ກ່ຽວກັບຂີປະນາວຸດ;

2. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ໄດ້ໃຫ້ການສະໜັບສະໜູນໃຫ້ແກ່ໂຄງການກ່ຽວກັບນິວເຄຼຍ ແລະ ຂີປະນາວຸດທີ່ມີອານຸພາບທຳລາຍລ້າງຜານ ລວມໄປເຖິງການໃຫ້ການສະໜັບສະໜູນຜ່ານວິທີການ ທີ່ບໍ່ສອດຄ່ອງກັບກົດໝາຍ;

3. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ໄດ້ກະທຳ ໃນນາມ ຫຼື ຕາມຄຳສັ່ງຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ໄດ້ກຳນົດໄວ້ໃນ ຂໍ້ 1 ແລະ 2 ຂອງມາດຕານີ້;

4. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ເປັນເຈົ້າຂອງ ຫຼື ຢູ່ພາຍໃຕ້ການຄວບຄຸມ ທັງທາງກົງ ຫຼື ທາງອ້ອມຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ກຳນົດໄວ້ໃນ ຂໍ້ 1 ແລະ 2 ຂອງຄຳສັ່ງ ສະບັບນີ້;

5. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ໄດ້ຊ່ວຍໃນການຫຼີກລ່ຽງມາດຕະການລົງໂທດ ຫຼື ການຝ່າຝືນຂໍ້ກຳນົດ ຂອງຍັດຕິ 1718 (ປີ 2006) ແລະ ຍັດຕິ 1874 (ປີ 2009);

6. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ໄດ້ໃຫ້ການສະໜັບສະໜູນ ແກ່ໂຄງການ ຫຼື ກິດຈະການ ທີ່ຖືກຫ້າມ ໂດຍຍັດຕິທີ່ກ່ຽວຂ້ອງ ຫຼື ມີການຫຼົບຫຼີກຂໍ້ກຳນົດຂອງຍັດຕິ;

7. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ມີສ່ວນຮ່ວມ, ກ່ຽວຂ້ອງໂດຍກົງ ຫຼື ໃຫ້ການສະໜັບ ສະໜູນແກ່ການແຜ່ຂະຫຍາຍກິດຈະການທາງດ້ານນິວເຄຼຍ ຫຼື ການມີສ່ວນຮ່ວມໃນການຈັດຊື້ລາຍການຕ້ອງຫ້າມ ເປັນຕົ້ນ ສິ່ງຂອງ, ສິນຄ້າ, ອຸປະກອນ, ວັດສະດຸ ແລະ ເຕັກໂນໂລຊີ ທີ່ລະບຸໄວ້ໃນ ຍັດຕິຂອງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດທີ່ກ່ຽວຂ້ອງ;

8. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ໃຫ້ການຊ່ວຍເຫຼືອແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ໄດ້ຖືກກຳນົດໃນບັນຊີລາຍຊື່ ໃນການຫຼົບຫຼີກ ຫຼື ດຳເນີນການ ທີ່ຂັດກັບຍັດຕິຂອງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ;

9. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ກະທຳໃນນາມ ຫຼື ຕາມຄຳສັ່ງຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ໄດ້ຖືກກຳນົດໄວ້ໃນ ຂໍ້ 7 ແລະ 8 ຂອງມາດຕານີ້ ຫຼື ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫຼື ກຸ່ມຄົນ ເຫຼົ່ານັ້ນ ເປັນເຈົ້າຂອງ ຫຼື ມີອຳນາດຄວບຄຸມ.

ພາຍຫຼັງການພິຈາລະນາແລ້ວ ເຫັນວ່າ ມີຂໍ້ມູນ ຫຼັກຖານ ທີ່ສາມາດຢັ້ງຢືນໄດ້ວ່າ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ດັ່ງກ່າວ ມີ ຫຼື ບໍ່ມີ ພຶດຕິກຳ ຫຼື ການເຄື່ອນໄຫວທີ່ພົວພັນກັບ ການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ ກະຊວງປ້ອງກັນຄວາມສະຫງົບ ຕ້ອງສະເໜີກະຊວງການຕ່າງປະເທດ ເພື່ອສະເໜີຕໍ່ສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ພິຈາລະນາ.

**ມາດຕາ 19 ການສະເໜີໄປຫາສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ**

ກະຊວງການຕ່າງປະເທດສະເໜີ ຖອນຊື່ອອກຈາກບັນຊີລາຍຊື່ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ບໍ່ມີ ພຶດຕິກຳ ຫຼື ການເຄື່ອນໄຫວ ທີ່ພົວພັນກັບ ການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ ໄປຫາສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ຕາມແບບພິມ ທີ່ອົງການດັ່ງກ່າວກຳນົດ ໂດຍຜ່ານຈຸດປະສານງານ ທີ່ຮັບຜິດຊອບໃນການຖອນລາຍຊື່ ຂອງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ.

ນອກຈາກນີ້ ກະຊວງປ້ອງກັນຄວາມສະຫງົບ ຍັງຕ້ອງແຈ້ງ ສິດ ແລະ ລາຍລະອຽດ ໃນການຮ້ອງຂໍຖອນລາຍຊື່ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຢູ່ໃນບັນຊີລາຍຊື່ຂອງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ແລະ ຈຸດປະສານງານ ທີ່ຮັບຜິດຊອບໃນການຖອນລາຍຊື່ ຂອງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ.

**ມາດຕາ 20 ການນຳສົ່ງບັນຊີລາຍຊື່ຂອງສະພາຄວາມໝັ້ນຄົງອົງການສະຫະປະຊາຊາດ**

ພາຍຫຼັງ ກະຊວງການຕ່າງປະເທດ ໄດ້ຮັບບັນຊີລາຍຊື່ຈາກສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ບໍ່ຈຳເປັນຕ້ອງ ຄົ້ນຄວ້າ, ພິຈາລະນາ ແລະ ຕ້ອງນຳສົ່ງບັນຊີລາຍຊື່ດັ່ງກ່າວໄປຫາ ກະຊວງປ້ອງກັນຄວາມສະຫງົບ, ກະຊວງເຕັກໂນໂລຊີ ແລະ ການສື່ສານ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ສຕຝງ ທັນທີທັນໃດ.

ກະຊວງປ້ອງກັນຄວາມສະຫງົບ, ກະຊວງເຕັກໂນໂລຊີ ແລະ ການສື່ສານ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ສຕຝງ ຕ້ອງແຈ້ງບັນຊີລາຍຊື່ຂອງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ໄປຫາ ດ່ານເຂົ້າ-ອອກ ສປປ ລາວ, ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ວິສາຫະກິດໄປສະນີ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອລະງັບທຸລະກຳ ຫຼື ການໃຫ້ບໍລິການ ແລະ ກັກທຶນ ພ້ອມທັງສະເໜີຕໍ່ກະຊວງປ້ອງກັນຄວາມສະຫງົບ ອອກຄຳສັ່ງ ຍຶດ ຫຼື ອາຍັດ ທຶນ ທີ່ພົວພັນກັບ ຜູ້ຢູ່ໃນບັນຊີລາຍຊື່ ຫຼື ທີ່ພົວພັນກັບ ການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ ບໍ່ເກີນ ຊາວສີ່ ຊົ່ວໂມງ ພາຍຫຼັງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ຮັບຮອງ ຫຼື ປັບປຸງ ບັນຊີລາຍຊື່ ແລະ ເຜີຍແຜ່ບັນຊີລາຍຊື່ດັ່ງກ່າວ ຜ່ານເວັບໄຊສ໌ຂອງລັດຖະບານ ຫຼື ເວັບໄຊສ໌ຂອງອົງການຈັດຕັ້ງທີ່ກ່ຽວຂ້ອງ ທັນທີທັນໃດ.

ກະຊວງປ້ອງກັນຄວາມສະຫງົບ, ກະຊວງເຕັກໂນໂລຊີ ແລະ ການສື່ສານ, ກະຊວງອຸດສາຫະກຳ ແລະ ການຄ້າ, ສຕຝງ, ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ວິສາຫະກິດໄປສະນີ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ແລະ ພາກສ່ວນທີ່ກ່ຽວຂ້ອງ ສາມາດຕິດຕາມ ບັນຊີລາຍຊື່ຂອງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ຜ່ານລະບົບເອເລັກໂຕຣນິກ ແລະ ຜ່ານຊ່ອງທາງອື່ນ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 21 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ພົວພັນກັບທຶນ ຫຼື ຊັບສິນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຢູ່ໃນບັນຊີລາຍຊື່ ຫຼື ຜູ້ທີ່ພົວພັນກັບການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ ຂອງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ;

2. ເຄື່ອນໄຫວ ຫຼື ດຳເນີນການ ກ່ຽວກັບທຶນ ໂດຍທີ່ຮູ້ວ່າທຶນນັ້ນ ໃຜເປັນເຈົ້າຂອງ, ຖືກຄວບຄຸມ ຫຼື ໄດ້ຖືກຄອບຄອງ ທັງທາງກົງ ຫຼື ທາງອ້ອມ ທັງໝົດ ຫຼື ບາງສ່ວນ ຫຼື ກະທຳໃນນາມ ຫຼື ຕາມຄຳສັ່ງຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຖືກກຳນົດບັນຊີລາຍຊື່ທີ່ພົວພັນກັບການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ ຂອງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ;

3. ເຮັດໃຫ້ ທຶນ ຫຼື ຊັບສິນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຢູ່ໃນບັນຊີລາຍຊື່ ຫຼື ຜູ້ທີ່ພົວພັນກັບການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ ຂອງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ປ່ຽນຮູບ, ພ້ອມນຳໃຊ້ ໂດຍທາງກົງ ຫຼື ທາງອ້ອມ, ທັງໝົດ ຫຼື ບາງສ່ວນ;

4. ພົວພັນ ຫຼື ເຂົ້າຮ່ວມ ໃນການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ;

5. ພົວພັນທຸກຮູບແບບ ຫຼື ໃຫ້ການຊ່ວຍເຫຼືອແກ່ຜູ້ສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ;

6. ພົວພັນກັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຢູ່ໃນບັນຊີລາຍຊື່ ຫຼື ຜູ້ທີ່ພົວພັນກັບການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ;

7. ໃຫ້, ຮັບ ສິນບົນ, ເປັນສື່ກາງໃນການໃຫ້ ຫຼື ຮັບສິນບົນ ແກ່ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

8. ປອມແປງ ເອກະສານ ຫຼື ນຳໃຊ້ເອກະສານປອມ;

9. ປິດບັງ, ຊຸກເຊື່ອງ, ນາບຂູ່, ກີດໜ່ວງ ຖ່ວງດຶງ ແລະ ຂັດຂວາງ ການປະຕິບັດໜ້າທີ່ຂອງພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

10. ລາຍງານການເຄື່ອນໄຫວກ່ຽວກັບການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ທີ່ບໍ່ມີຄວາມຈິງ;

11. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 22 ຂໍ້ຫ້າມ ສຳລັບ ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ວິສາຫາກິດໄປສະນີ ແລະ ພາກສ່ວນທີ່ກ່ຽວຂ້ອງ**

ຫ້າມຫົວໜ່ວຍທີ່ມີໜ້າທີ່ລາຍງານ, ວິສາຫາກິດໄປສະນີ ແລະ ພາກສ່ວນທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ພົວພັນກັບ ທະນາຄານ ຫຼື ສະຖາບັນການເງິນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ບໍ່ມີຕົວຕົນ;

2. ພົວພັນກັບທະນາຄານຢູ່ປະເທດທີ່ບໍ່ມີກົດໝາຍ ຫຼື ລະບຽບການ ໃນການຕ້ານການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ;

3. ເຮັດທຸລະກິດ ຫຼື ທຸລະກຳ ກັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຢູ່ໃນບັນຊີລາຍຊື່ ຫຼື ຜູ້ທີ່ພົວພັນກັບການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ;

4. ໃຫ້ສິນບົນ, ເປັນສື່ກາງໃນການໃຫ້ ຫຼື ຮັບສິນບົນ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 23 ຂໍ້ຫ້າມ ສຳລັບ ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມ ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່ ແລະ ຕຳແໜ່ງ, ໃຊ້ຄວາມຮຸນແຮງ, ບັງຄັບ ນາບຂູ່ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກຂອງຕົນ ຈາກວຽກງານການຕ້ານການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ;

2. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບກ່ຽວກັບວຽກງານຕ້ານການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ບໍ່ມີສ່ວນກ່ຽວຂ້ອງ;

3. ສົມຮູ້ຮ່ວມຄິດ ກັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ພົວພັນກັບສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ;

4. ໃຫ້, ຮັບ ສິນບົນ, ເປັນສື່ກາງໃນການໃຫ້ ຫຼື ຮັບສິນບົນ;

5. ເມີນເສີຍຕໍ່ໜ້າທີ່ຮັບຜິດຊອບຂອງຕົນ ຫຼື ກີດໜ່ວງ ຖ່ວງດຶງເອກະສານ;

6. ມີພຶດຕິກຳອື່ນ ທີ່ເປັນການເມີດກົດໝາຍ.

## ໝວດທີ 6
## ການຄຸ້ມຄອງ ແລະ ກວດກາວຽກງານຕ້ານການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ

**ມາດຕາ 24 ອົງການຄຸ້ມຄອງ ແລະ ກວດກາ**

ຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເປັນຜູ້ຄຸ້ມຄອງ ແລະ ກວດກາ ວຽກງານຕ້ານ ການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງປ້ອງກັນຄວາມສະຫງົບ, ກະຊວງການຕ່າງປະເທດ, ກະຊວງເຕັກໂນໂລຊີ ແລະ ການສື່ສານ, ທະນາຄານແຫ່ງ ສປປ ລາວ, ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ.

**ມາດຕາ 25 ສິດ ແລະ ໜ້າທີ່ ຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານຕ້ານ ການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ ຄຕຟງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ ແລະ ລະບຽບການ ກ່ຽວກັບວຽກງານຕ້ານການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ ເພື່ອສະເໜີ ລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຕ້ານ ການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ ເປັນແຜນການ, ແຜນງານ ແລະ ໂຄງການ ພ້ອມທັງຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຕ້ານການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ;

4. ຮັບຮອງເອົາແຜນການດຳເນີນງານກ່ຽວກັບການຕ້ານການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ;

5. ຊີ້ນຳ, ຊຸກຍູ້, ຄຸ້ມຄອງ, ຕິດຕາມ ການຈັດຕັ້ງປະຕິບັດວຽກງານຕ້ານການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ ຂອງອົງການຈັດຕັ້ງທີ່ກ່ຽວຂ້ອງ;

6. ຊີ້ນຳການບຳລຸງສ້າງ ແລະ ຍົກລະດັບ ບຸກຄະລາກອນ ກ່ຽວກັບວຽກງານຕ້ານການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ ຂອງອົງການຈັດຕັ້ງທີ່ກ່ຽວຂ້ອງ;

7. ແຕ່ງຕັ້ງຄະນະອານຸກຳມະການ ເພື່ອການປະສານງານ ແລະ ຈັດຕັ້ງປະຕິບັດວຽກງານຕ້ານການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ;

8. ກຳນົດບັນດາຫົວໜ່ວຍທີ່ມີໜ້າທີ່ລາຍງານ;

9. ຊີ້ນຳກ່ຽວກັບການ ພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຕ້ານການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ;

10. ສະຫຼຸບ ແລະ ລາຍງານວຽກງານຂອງຕົນ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍຂອງລັດຖະບານ.

**ມາດຕາ 26 ສິດ ແລະ ໜ້າທີ່ ຂອງກະຊວງປ້ອງກັນຄວາມສະຫງົບ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານຕ້ານ ການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ ກະຊວງປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເປັນເຈົ້າການໃນການປະສານງານ, ດຳເນີນ ການພິຈາລະນາແກ້ໄຂກ່ຽວກັບ ທຶນ ທີ່ຖືກ ຍຶດ ແລະ ອາຍັດ;

2. ຄົ້ນຄວ້າ ສ້າງ ແລະ ປັບປຸງ ນິຕິກຳກ່ຽວກັບວຽກງານ ກັກ, ຍຶດ ແລະ ອາຍັດ ທຶນ ຜູ້ຢູ່ໃນບັນຊີລາຍຊື່ ທີ່ພົວພັນກັບການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ;

3. ຄຸ້ມຄອງ, ຕິດຕາມ ກວດກາ ທຶນ ທີ່ຖືກ ຍຶດ ແລະ ອາຍັດ;

4. ນຳສົ່ງບັນຊີລາຍຊື່ ຜູ້ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ ໄປຍັງດ່ານເຂົ້າ-ອອກ ສປປ ລາວ;

5. ອອກຄຳສັ່ງ ຍຶດ ຫຼື ອາຍັດ ທຶນ ທັນທີທັນໃດ ຕາມການລາຍງານຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ, ວິສາຫະກິດໄປສະນີ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ທີ່ກຳລັງນຳໃຊ້ມາດຕະການທາງບໍລິຫານ;

6. ແຈ້ງເປັນລາຍລັກອັກສອນ ໄປຍັງຫົວໜ່ວຍທີ່ມີໜ້າທີ່ລາຍງານ ເພື່ອຊາບ ແລະ ຍົກເລີກ ການນຳໃຊ້ມາດຕະການທາງບໍລິຫານ ກໍລະນີເຫັນວ່າ ທຶນດັ່ງກ່າວ ຫາກບໍ່ ກ່ຽວຂ້ອງ ຫຼື ພົວພັນກັບຜູ້ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ;

7. ເກັບກຳ ຫຼື ສັງລວມຂໍ້ມູນ ຫຼັກຖານ ຕາມເງື່ອນໄຂການກຳນົດບັນຊີລາຍຊື່ຜູ້ທີ່ພົວພັນກັບການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ;

8. ປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງໃນການປະຕິບັດວຽກງານ ກັກ, ຍຶດ ແລະ ອາຍັດ ທຶນ ຜູ້ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ;

9. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານ ກັກ, ຍຶດ ແລະ ອາຍັດ ທຶນ ຜູ້ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 27 ສິດ ແລະ ໜ້າທີ່ ຂອງກະຊວງການຕ່າງປະເທດ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານຕ້ານ ການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ ກະຊວງການຕ່າງປະເທດ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ນຳສົ່ງບັນຊີລາຍຊື່ຜູ້ທີ່ພົວພັນກັບການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ ໄປຍັງກະຊວງປ້ອງກັນຄວາມສະຫງົບ, ກະຊວງອຸສະຫະກຳ ແລະ ການຄ້າ ແລະ ສຕຟງ ໂດຍທັນທີ;

2. ສະໜອງລາຍຊື່ ປະເທດ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຖືກຂວ້ຳບາດ ຕາມຍັດຕິຂອງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ;

3. ສະເໜີສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ເພີ່ມບັນຊີລາຍຊື່ ຫຼື ຖອນອອກຈາກ ບັນຊີລາຍຊື່ ຂອງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ໃນກໍລະນີ ເຫັນວ່າມີຫຼັກຖານທີ່ຢັ້ງຢືນໄດ້ວ່າ ບຸກຄົນ , ນິຕິບຸກຄົນ ຫຼື ການຈັດຕັ້ງ ຫຼື ກຸ່ມຄົນນັ້ນ ຫາກຖືກຕາມເງື່ອນໄຂຂອງການ ເພີ່ມຊື່ເຂົ້າໃນ ຫຼື ຖອນຊື່ອອກຈາກບັນຊີລາຍຊື່ ຕາມທີ່ໄດ້ລະບຸໄວ້ໃນຍັດຕິຂອງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ;

4. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຕ້ານການສະໜອງທຶນໃຫ້ແກ່ການແຜ່ພາຍ ອາວຸດທຳລາຍລ້າງຜານ ຂອງ ສປປ ລາວ ໃຫ້ແກ່ສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ຕາມພັນທະ ທີ່ກຳນົດໄວ້ໃນຍັດຕິຂອງອົງການ ດັ່ງກ່າວ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 28 ສິດ ແລະ ໜ້າທີ່ ຂອງກະຊວງອຸດສາຫະກຳ ແລະ ການຄ້າ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານຕ້ານ ການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ ກະຊວງອຸດສາຫະກຳ ແລະ ການຄ້າ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ນິຕິກຳ ແລະ ລະບຽບການ ເພື່ອຄຸ້ມຄອງ ຜູ້ດຳເນີນທຸລະກິດສິນຄ້າສອງດ້ານ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;

2. ຕິດຕາມ ກວດກາ ຜູ້ດຳເນີນທຸລະກິດສິນຄ້າສອງດ້ານ ເພື່ອການຕ້ານການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ;

3. ສະໜອງຂໍ້ມູນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຈະນຳເອົາ ແລະ ທີ່ຈະນຳໃຊ້ ສິນຄ້າທີ່ນຳໃຊ້ສອງດ້ານ ຊຶ່ງກ່ຽວກັບການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ ດັ່ງກ່າວ ໃຫ້ແກ່ພາກສ່ວນ ທີ່ກ່ຽວຂ້ອງ;

4. ແຈ້ງບັນຊີລາຍຊື່ຜູ້ທີ່ພົວພັນກັບ ການສະໜອງທຶນໃຫ້ແກ່ການແຜ່ພາຍອາວຸດທຳລາຍລ້າງຜານ ໄປຍັງຜູ້ດຳເນີນທຸລະກິດສິນຄ້ານຳໃຊ້ສອງດ້ານ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 29 ສິດ ແລະ ໜ້າທີ່ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານຕ້ານ ການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ກະຊວງເຕັກໂນໂລຊີ ແລະ ການສື່ສານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຕິດຕາມ ກວດກາ ການຈັດຕັ້ງປະຕິບັດການຕ້ານ ການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ໃນຂະແໜງການວິສາຫະກິດໄປສະນີ ແລະ ລາຍງານຂັ້ນເທິງຖັດຕົນ ໃນແຕ່ລະໄລຍະ;
2. ສະໜອງຂໍ້ມູນ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ກວດພົບທີ່ອາດມີຄວາມສ່ຽງກ່ຽວກັບການແຜ່ຜາຍອາວຸດທຳລາຍລ້າງຜານ ຫຼື ການສະໜອງທຶນໃຫ້ແກ່ການກະທຳດັ່ງກ່າວ ໃຫ້ແກ່ພາກສ່ວນກ່ຽວຂ້ອງ;
3. ແຈ້ງບັນຊີລາຍຊື່ຜູ້ທີ່ພົວພັນກັບ ການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ດັ່ງກ່າວ ໄປຍັງວິສາຫະກິດໄປສະນີ;
4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 30 ສິດ ແລະ ໜ້າທີ່ ຂອງສຳນັກງານຂໍ້ມູນຕ້ານການຟອກເງິນ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານຕ້ານ ການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ສຕຟງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມ ກວດກາ ການຈັດຕັ້ງປະຕິບັດ ການຕ້ານການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ທີ່ຕົນຄຸ້ມຄອງ;
2. ແຈ້ງບັນຊີລາຍຊື່ຜູ້ທີ່ພົວພັນກັບ ການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ໄປຍັງຫົວໜ່ວຍທີ່ມີໜ້າທີ່ລາຍງານ ໂດຍທັນທີ;
3. ບຳລຸງ ສ້າງ ແລະ ຍົກລະດັບ ບຸກຄະລາກອນ ກ່ຽວກັບວຽກງານຕ້ານການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ຂອງອົງການຈັດຕັ້ງທີ່ກ່ຽວຂ້ອງ;
4. ປະສານສົມທົບກັບ ກະຊວງປ້ອງກັນຄວາມສະຫງົບ, ກະຊວງອຸດສະຫະກຳ ແລະ ການຄ້າ, ກະຊວງ, ອົງການຈັດຕັ້ງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອພິຈາລະນານຳໃຊ້ມາດຕະການປັບໃໝ ຕໍ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫຼື ກຸ່ມຄົນ, ຫົວໜ່ວຍທີ່ມີໜ້າທີ່ລາຍງານ ແລະ ວິສາຫະກິດໄປສະນີ ທີ່ກ່ຽວຂ້ອງ ທີ່ລະເມີດດຳລັດສະບັບນີ້;
5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 31 ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ໃຫ້ການຮ່ວມມື ແລະ ປະສານສົມທົບ ກັບ ຄຕຟງ ແລະ ສຕຟງ ໃນການຈັດຕັ້ງປະຕິບັດວຽກງານ ຕ້ານການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 32 ເນື້ອໃນກວດກາ**

ເນື້ອໃນກວດກາ ວຽກງານ ຕ້ານການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ມີ ເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຕ້ານການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ;
2. ການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ຂອງພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
3. ການສ້າງ ແລະ ປະຕິບັດແຜນການ ກ່ຽວກັບວຽກງານ ຕ້ານການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ;
4. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 33 ຮູບການກວດກາ**

ຮູບການກວດກາ ວຽກງານ ຕ້ານການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ມີ ສາມຮູບການ ດັ່ງນີ້:

1. ການກວດກາປົກກະຕິ ຊຶ່ງແມ່ນ ການກວດກາ ທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ກ່ອນລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ກ່ອນລ່ວງໜ້າ.

ໃນການດຳເນີນການກວດກາວຽກງານ ຕ້ານການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ຕ້ອງປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ໝວດທີ 7
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 34 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 35 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ໄດ້ລະເມີດດຳລັດສະບັບນີ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ທີ່ຕົນໄດ້ກໍ່ຂຶ້ນ ຫຼື ລົງໂທດທາງອາຍາ ຕາມກົດໝາຍ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 36 ການຈັດຕັ້ງປະຕິບັດ**

ທະນາຄານແຫ່ງ ສປປ ລາວ ເປັນເຈົ້າການໃນການຈັດຕັ້ງປະຕິບັດ ດຳລັດສະບັບນີ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 37 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 04 ພະຈິກ 2025 ເປັນຕົ້ນໄປ.

**ຕາງໜ້າລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ສອນໄຊ ສີພັນດອນ